ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ

ເລກທີ 1740 /ຮສສ

ນະຄອນຫຼວງວຽງຈັນ, ວັນທີ 25 APR 2016

# ຂໍ້ຕົກລົງ

## ວ່າດ້ວຍການກຳນົດເພດານເງິນເດືອນປະກັນຕົນ ຕ່ຳສຸດ ແລະ ສູງສຸດເພື່ອຄິດໄລ່ເງິນສົມທົບເຂົ້າກອງທຶນປະກັນສັງຄົມ

- ອີງຕາມກົດໝາຍວ່າດ້ວຍການປະກັນສັງຄົມ ເລກທີ 34/ສພຊ, ລົງວັນທີ 26 ກໍລະກົດ 2013;
- ອີງຕາມບົດບັນທຶກກອງປະຊຸມສະພາບໍລິຫານ ຂອງ ຫກປຊ ຄັ້ງທີ III ສະໄໝທີ I ສະບັບເລກທີ 0020/ສພ.ກປຊ, ລົງວັນທີ 03/11/2015;
- ອີງຕາມການສະເໜີຂອງຫ້ອງການກອງທຶນປະກັນສັງຄົມແຫ່ງຊາດ ສະບັບເລກທີ 0588/ຫກປຊ ລົງວັນທີ 18/03/2016.

**ລັດຖະມົນຕີວ່າການ ຕົກລົງ:**

**ມາດຕາ 1** ເຫັນດີໃຫ້ປັບເພດານເງິນເດືອນປະກັນຕົນ ຫຼື ເພດານເງິນສົມທົບສູງສຸດ ແລະ ກຳນົດເງິນເດືອນປະກັນຕົນຕ່ຳສຸດ ເພື່ອເປັນບ່ອນອີງໃນການຄິດໄລ່ເງິນສົມທົບເຂົ້າກອງທຶນປະກັນສັງຄົມແຫ່ງຊາດ ດັ່ງນີ້:

1.1 ເຫັນດີປັບເພດານເງິນເດືອນປະກັນຕົນສູງສຸດຂຶ້ນເທົ່າກັບ 5 ເທື່ອຂອງຄ່າແຮງງານຂັ້ນຕ່ຳສຸດທີ່ລັດຖະບານກຳນົດໃນແຕ່ລະໄລຍະ ຊຶ່ງປະຈຸບັນແມ່ນ ເທົ່າກັບ 4.500.000 ກີບ (900.000 ກີບ x 5 = 4.500.000 ກີບ).

1.2 ເຫັນດີກຳນົດເອົາຄ່າແຮງງານຂັ້ນຕ່ຳທີ່ລັດຖະບານກຳນົດ (900.000 ກີບ) ເປັນເງິນເດືອນປະກັນຕົນຕ່ຳສຸດ. ກໍລະນີມີຄວາມຈຳເປັນທີ່ລາຍຮັບປະຈຳເດືອນຫາກຫຼຸດລະດັບເງິນເດືອນຂັ້ນຕ່ຳ ທີ່ມີສາເຫດມາຈາກການເຮັດວຽກບໍ່ເຕັມເວລາ, ເຈັບປ່ວຍ, ເງິນຜະລິດຕະພັນຫຼຸດລົງ ຫຼື ອື່ນໆ ແມ່ນລະດັບເງິນເດືອນປະກັນຕົນຕ່ຳສຸດບໍ່ໃຫ້ຫຼຸດເຄິ່ງໜຶ່ງ ຂອງຄ່າແຮງງານຂັ້ນຕ່ຳທີ່ລັດຖະບານກຳນົດ ຊຶ່ງປະຈຸບັນ ເທົ່າກັບ 450.000 ກີບ (50% ຂອງ 900,000 ກີບ).

**ມາດຕາ 2** ມອບໃຫ້ຫ້ອງການກອງທຶນປະກັນສັງຄົມແຫ່ງຊາດ, ບັນດາຫົວໜ່ວຍແຮງງານ, ຜູ້ປະກັນຕົນແລະທຸກພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຕາມຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 3** ຂໍ້ຕົກລົງສະບັບນີ້ປ່ຽນແທນຂໍ້ຕົກລົງສະບັບເລກທີ 1851/ຮສສ ລົງວັນທີ 13/06/2012 ແລະ ມີຜົນສັກສິດນັບແຕ່ວັນທີ 01 ມັງກອນ 2017 ເປັນຕົ້ນໄປ.

**ລັດຖະມົນຕີວ່າການ**

**ກະຊວງແຮງງານ ແລະ ສະຫວັດດີການສັງຄົມ**

ດຣ.ຄຳແພງ ໄຊສົມແພງ